ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------

ກະຊວງການເງິນ

ກົມພາສີ

ເລກທີ: 00172 /ກພສ

ນະຄອນຫລວງວຽງຈັນ, ວັນທີ 16 OCT 2013

## <u>ຂໍ້ຕົກລົງຂອງກົມພາສີ</u>

## ວ່າດ້ວຍການນຳໃຊ້ເລກລະຫັດລະບອບໃບແຈ້ງພາສີເປັນລາຍລະອຽດ

- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ: 0362/ນຍ, ລົງວັນທີ: 19/10/2007
- ອີງຕາມ ກົດໝາຍວ່າດ້ວຍພາສີ, ສະບັບປັບປຸງເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011

ເພື່ອເປັນການຮອງຮັບການນຳໃຊ້ລະບົບແບບອີເລັກໂທຣນິກ ແລະ ການແຈ້ງພາສີເປັນລາຍລະອຽດ ທີ່ຕິດພັນກັບການສົ່ງອອກ-ນຳເຂົ້າສິນຄ້າເຄື່ອງຂອງທຸກປະເພດ ສະດວກໃນການຕິດຕາມສະຖິຕິ ແລະ ລະອຽດຊັດເຈນ, ພ້ອມດຽວກັນນັ້ນທັງເປັນການອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການ ໃນການປະກອບເອກະສານມີຄວາມສະດວກວ່ອງໄວ, ເຂົ້າໃຈງ່າຍ ແລະ ໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

## <u>ກົມພາສີຕົກລົງ</u>

<u>**ມາດຕາ 1:**</u> ກຳນົດເຄື່ອງໝາຍ, ເລກໝາຍຂອງການແຈ້ງພາສີ (ຫ້ອງທີ່ 1 ຂອງໃບແຈ້ງພາສີເປັນລາຍລະອຽດ) ໃນການສົ່ງອອກ-ນຳເຂົ້າ ດັ່ງນີ້:

<u>ການສົ່ງອອກ:</u>
- EX 1: ການສົ່ງອອກ
- EX 2: ການສົ່ງອອກຊົ່ວຄາວ
- EX 3: ການສົ່ງອອກຄືນ

<u>ການນຳເຂົ້າ:</u>
- IM 4: ການນຳເຂົ້າເພື່ອການຊົມໃຊ້
- IM 5: ການນຳເຂົ້າຊົ່ວຄາວ
- IM 6: ການນຳເຂົ້າຄືນ
- IM 7: ການນຳເຂົ້າລະບອບສາງ
- IM 8: ການເຄື່ອນຍ້າຍ

<u>ການນຳເຂົ້າ-ສົ່ງອອກຍ່ອຍ:</u>
- SD 1: ການສົ່ງອອກຍ່ອຍ
- SD 4: ການນຳເຂົ້າຍ່ອຍ

<u>**ມາດຕາ 2:**</u> ເລກລະຫັດລະຫັດເຄົ້າ 2 ຕົວເລກທຳອິດແມ່ນມີຄວາມໝາຍລະອຽດດັ່ງນີ້:

1. ລະບອບ 10: ການສົ່ງອອກ
2. ລະບອບ 11: ການສົ່ງອອກຍ່ອຍ
3. ລະບອບ 20: ການສົ່ງອອກຊົ່ວຄາວ

4. ລະບອບ 30: ການສົ່ງອອກຄືນ
5. ລະບອບ 35: ການສົ່ງອອກຄືນຜ່ານລະບົບ C2000
6. ລະບອບ 40: ການນຳເຂົ້າເພື່ອການຊົມໃຊ້
7. ລະບອບ 44: ການນຳເຂົ້າຍ່ອຍ
8. ລະບອບ 45: ການນຳເຂົ້າເພື່ອສົ່ງອອກ
9. ລະບອບ 50: ການນຳເຂົ້າຊົ່ວຄາວທົ່ວໄປ
10. ລະບອບ 51: ການນຳເຂົ້າຊົ່ວຄາວເຂດເສດຖະກິດພິເສດ
11. ລະບອບ 52: ການນຳເຂົ້າຊົ່ວຄາວເພື່ອຜະລິດປຸງແຕ່ງ
12. ລະບອບ 54: ການນຳເຂົ້າຊົ່ວຄາວຂອງອົງການຈັດຕັ້ງສາກົນ ແລະ ສະຖານທູດ
13. ລະບອບ 55: ການນຳເຂົ້າຊົ່ວຄາວຜ່ານລະບົບ C2000
14. ລະບອບ 56: ການນຳເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງລັດ
15. ລະບອບ 57: ການນຳເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງເອກະຊົນ
16. ລະບອບ 60: ການນຳເຂົ້າຄືນ
17. ລະບອບ 71: ການນຳເຂົ້າລະບອບສາງຮ້ານຄ້າປອດພາສີ
18. ລະບອບ 72: ການນຳເຂົ້າຮ້ານຄ້າປອດ
19. ລະບອບ 75: ການນຳເຂົ້າລະບອບສາງຜ່ານລະບົບ C2000
20. ລະບອບ 81: ການນຳເຂົ້າຄ້ຳປະກັນ
21. ລະບອບ 82: ການຜ່ານແດນສາກົນ
22. ລະບອບ 83: ການເຄື່ອນຍ້າຍພາຍໃນ
23. ລະບອບ 85: ການນຳເຂົ້າຄ້ຳປະກັນຜ່ານລະບົບ C2000

<u>ມາດຕາ 3:</u> ການກຳນົດເລກລະຫັດ 2 ຕົວເລກຕໍ່ຈາກເລກລະຫັດເຄົ້າແມ່ນມີຄວາມໝາຍລະອຽດດັ່ງນີ້:

1. ລະບອບ 10 00: ການສົ່ງອອກ
2. ລະບອບ 10 40: ການສົ່ງອອກ ພາຍຫລັງການນຳເຂົ້າເພື່ອການຊົມໃຊ້
3. ລະບອບ 11 00: ການສົ່ງອອກຍ່ອຍ
4. ລະບອບ 20 00: ການສົ່ງອອກຊົ່ວຄາວ
5. ລະບອບ 30 45: ການສົ່ງອອກຄືນ ສິນຄ້ານຳເຂົ້າເພື່ອສົ່ງອອກ
6. ລະບອບ 30 50: ການສົ່ງອອກຄືນ ພາຍຫລັງການນຳເຂົ້າຊົ່ວຄາວທົ່ວໄປ
7. ລະບອບ 30 51: ການສົ່ງອອກຄືນ ພາຍຫລັງການນຳເຂົ້າຊົ່ວຄາວເຂດເສດຖະກິດພິເສດ
8. ລະບອບ 30 52: ການສົ່ງອອກຄືນ ພາຍຫລັງການນຳເຂົ້າຊົ່ວຄາວເພື່ອຜະລິດປຸງແຕ່ງ
9. ລະບອບ 30 54: ການສົ່ງອອກຄືນ ພາຍຫລັງການນຳເຂົ້າຊົ່ວຄາວຂອງອົງການຈັດຕັ້ງສາກົນ, ສະຖານທູດ
10. ລະບອບ 30 55: ການສົ່ງອອກຄືນ ພາຍຫລັງການນຳເຂົ້າຊົ່ວຄາວຜ່ານລະບົບ C2000
11. ລະບອບ 30 56: ການສົ່ງອອກຄືນ ພາຍຫລັງການນຳເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງລັດ
12. ລະບອບ 30 57: ການສົ່ງອອກຄືນ ພາຍຫລັງການນຳເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງເອກະຊົນ
13. ລະບອບ 30 71: ການສົ່ງອອກຄືນ ພາຍຫລັງການນຳເຂົ້າສາງຮ້ານຄ້າປອດພາສີ
14. ລະບອບ 30 72: ການສົ່ງອອກຄືນ ພາຍຫລັງການນຳເຂົ້າຮ້ານຄ້າປອດ

15. ລະບອບ 40 00: ການນຳເຂົ້າເພື່ອການຊົມໃຊ້
16. ລະບອບ 40 50: ການນຳເຂົ້າເພື່ອການຊົມໃຊ້ ພາຍຫລັງການນຳເຂົ້າຊົ່ວຄາວທົ່ວໄປ
17. ລະບອບ 40 51: ການນຳເຂົ້າເພື່ອການຊົມໃຊ້ ພາຍຫລັງການນຳເຂົ້າຊົ່ວຄາວເຂດເສດຖະກິພິເສດ
18. ລະບອບ 40 52: ການນຳເຂົ້າເພື່ອການຊົມໃຊ້ ພາຍຫລັງການນຳເຂົ້າຊົ່ວຄາວເພື່ອຜະລິດປຸງແຕ່ງ
19. ລະບອບ 40 54: ການນຳເຂົ້າເພື່ອການຊົມໃຊ້ ພາຍຫລັງການນຳເຂົ້າຊົ່ວຄາວຂອງອົງການຈັດຕັ້ງສາກົນ, ສະຖານທູດ
20. ລະບອບ 40 55: ການນຳເຂົ້າເພື່ອການຊົມໃຊ້ ພາຍຫລັງການນຳເຂົ້າຊົ່ວຄາວຜ່ານລະບົບ C2000
21. ລະບອບ 40 56: ການນຳເຂົ້າເພື່ອການຊົມໃຊ້ ພາຍຫລັງການນຳເຂົ້າຊົ່ວຄາວໂຄງການລົງທຶນຂອງລັດ
22. ລະບອບ 40 57: ການນຳເຂົ້າເພື່ອການຊົມໃຊ້ ພາຍຫລັງການນຳເຂົ້າຊົ່ວຄາວໂຄງການລົງທຶນຂອງເອກະຊົນ
23. ລະບອບ 40 71: ການນຳເຂົ້າເພື່ອການຊົມໃຊ້ ພາຍຫລັງການນຳເຂົ້າສາງຮ້ານຄ້າປອດພາສີ
24. ລະບອບ 40 72: ການນຳເຂົ້າເພື່ອການຊົມໃຊ້ ພາຍຫລັງການນຳເຂົ້າຮ້ານຄ້າປອດພາສີ
25. ລະບອບ 40 81: ການນຳເຂົ້າເພື່ອການຊົມໃຊ້ ພາຍຫລັງການນຳເຂົ້າຄໍ້າປະກັນ
26. ລະບອບ 40 85: ການນຳເຂົ້າເພື່ອການຊົມໃຊ້ ພາຍຫລັງການນຳເຂົ້າຄໍ້າປະກັນຜ່ານລະບົບ C2000
27. ລະບອບ 44 00: ການນຳເຂົ້າຍ່ອຍ
28. ລະບອບ 50 00: ການນຳເຂົ້າຊົ່ວຄາວທົ່ວໄປ
29. ລະບອບ 50 85: ການນຳເຂົ້າຊົ່ວຄາວທົ່ວໄປ ພາຍຫລັງການນຳເຂົ້າຄໍ້າປະກັນຜ່ານລະບົບ C2000
30. ລະບອບ 51 00: ການນຳເຂົ້າຊົ່ວຄາວເຂດເສດຖະກິດພິເສດ
31. ລະບອບ 52 00: ການນຳເຂົ້າຊົ່ວຄາວ ຂອງໂຮງງານເພື່ອຜະລິດປຸງແຕ່ງ
32. ລະບອບ 52 81: ການນຳເຂົ້າຊົ່ວຄາວ ຂອງໂຮງງານເພື່ອຜະລິດປຸງແຕ່ງ ພາຍຫລັງການນຳເຂົ້າຄໍ້າປະກັນ
33. ລະບອບ 52 85: ການນຳເຂົ້າຊົ່ວຄາວ ຂອງໂຮງງານເພື່ອຜະລິດປຸງແຕ່ງ ພາຍຫລັງການນຳເຂົ້າຄໍ້າປະກັນຜ່ານລະບົບ C2000
34. ລະບອບ 54 00: ການນຳເຂົ້າຊົ່ວຄາວຂອງອົງການຈັດຕັ້ງສາກົນ ແລະ ສະຖານທູດ
35. ລະບອບ 55 00: ການນຳເຂົ້າຊົ່ວຄາວຜ່ານລະບົບ C2000
36. ລະບອບ 56 00: ການນຳເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງລັດ
37. ລະບອບ 56 81: ການນຳເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງລັດ ພາຍຫລັງການນຳເຂົ້າຄໍ້າປະກັນ
38. ລະບອບ 56 85: ການນຳເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງລັດ ພາຍຫລັງການນຳເຂົ້າຄໍ້າປະກັນ ຜ່ານລະບົບ C2000
39. ລະບອບ 57 00: ການນຳເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງເອກະຊົນ
40. ລະບອບ 57 81: ການນຳເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງເອກະຊົນ ພາຍຫລັງການນຳເຂົ້າຄໍ້າປະກັນ
41. ລະບອບ 57 85: ການນຳເຂົ້າຊົ່ວຄາວຂອງໂຄງການລົງທຶນຂອງເອກະຊົນ ພາຍຫລັງການນຳເຂົ້າຄໍ້າປະກັນຜ່ານລະບົບ C2000
42. ລະບອບ 60 20: ການນຳເຂົ້າຄືນ ພາຍຫລັງການສົ່ງອອກຊົ່ວຄາວ
43. ລະບອບ 71 00: ການນຳເຂົ້າສາງຮ້ານຄ້າປອດພາສີ
44. ລະບອບ 71 71: ການເຄື່ອນຍ້າຍລະຫວ່າງສາງຮ້ານຄ້າປອດພາສີ ຫາສາງຮ້ານຄ້າປອດ (ສາຂາ)
45. ລະບອບ 72 00: ການນຳເຂົ້າຮ້ານຄ້າປອດພາສີ
46. ລະບອບ 72 71: ການເຄື່ອນຍ້າຍຈາກສາງເຂົ້າຮ້ານຄ້າປອດພາສີ
47. ລະບອບ 72 72: ການເຄື່ອນຍ້າຍລະຫວ່າງຮ້ານຄ້າປອດພາສີ ຫາຮ້ານຄ້າປອດພາສີ (ສາຂາ)

24. ລະບອບ 81 00: ການນຳເຂົ້າຄ້ຳປະກັນ
25. ລະບອບ 82 00: ການຜ່ານແດນສາກົນ
26. ລະບອບ 83 40: ການເຄື່ອນພາຍໃນ
27. ລະບອບ 85 00: ການນຳເຂົ້າຄ້ຳປະກັນຜ່ານລະບົບ C2000

2 ຕົວເລກດັ່ງກ່າວນີ້ແມ່ນ ສະແດງເຖິງການແຈ້ງໃບຄັ້ງກ່ອນ, ຖ້າບໍ່ມີໃບແຈ້ງຄັ້ງກ່ອນ ແລະ ບໍ່ມີການລົບລ້າງ ແມ່ນກຳນົດໃຫ້ໃຊ້ "00")

**ມາດຕາ 4:** ກຳນົດລະຫັດ 3 ຕົວເລກສຸດທ້າຍແມ່ນການຊຳລະສະສາງຄ່າພາສີ ແລະ ພັນທະອຕາມແຕ່ລະເງື່ອນໄຂ

1. ລະຫັດ 000: ເສຍ ຫລື ຍົກເວັ້ນຄ່າພາສີ ແລະ ພັນທະອື່ນໆ ຕາມເງື່ອນໄຂປົກກະຕິ
2. ລະຫັດ 100: ຍົກເວັ້ນຄ່າຊັກພິເສດ (ສະເພາະການສົ່ງອອກ EX1 "10")
3. ລະຫັດ 405: ເສຍພາສີ ແລະ ພັນທະອື່ນ ກໍລະນີເປັນຄະດີ
4. ລະຫັດ 406: ເສຍພາສີ ແລະ ພັນທະອື່ນ ກໍລະນີທີ່ຜິດດ່ງງ
5. ລະຫັດ 410: ເສຍພາສີຫລຸດຜ່ອນຕາມນະໂຍບາຍສົ່ງເສີມການລົງທຶນ
6. ລະຫັດ 415: ເສຍພາສີ, ຍົກເວັ້ນອາກອນ ແລະ ພັນທະອື່ນໆ ຕາມກົດໝາຍສົ່ງເສີມການລົງທຶນ
7. ລະຫັດ 425: ເສຍພາສີ 50%, ອາກອນ ແລະ ພັນທະອື່ນໆ ຕາມລະບຽບການ ຕາມກົດໝາຍສົ່ງເສີມການລົງທຶນ
8. ລະຫັດ 430: ຍົກເວັ້ນອາກອນມູນຄ່າເພີ້ມ, ເສຍພາສີ ແລະ ພັນທະອື່ນໆ ຕາມລະບຽບການ ຕາມກົດໝາຍສົ່ງເສີມການລົງທຶນ
9. ລະຫັດ 435: ເສຍສະເພາະ ອາກອນມູນຄ່າເພີ້ມ, ຍົກເວັ້ນຄ່າພາສີ ແລະ ພັນທະອື່ນໆ ຕາມກົດໝາຍສົ່ງເສີມການລົງທຶນ
10. ລະຫັດ 440: ຍົກເວັ້ນຄ່າພາສີ, ເສຍອາກອນ ແລະ ພັນທະອື່ນໆ ຕາມລະບຽບການ ຕາມກົດໝາຍສົ່ງເສີມການລົງທຶນ
11. ລະຫັດ 445: ເສຍ 50% ຂອງຄ່າພາສີ ອາກອນ ແລະ ພັນທະອື່ນໆ ຕາມກົດໝາຍສົ່ງເສີມການລົງທຶນ
12. ລະຫັດ 450: ການນຳເຂົ້າເພື່ອສົ່ງອອກ (ສະເພາະລະຫັດເຄົ້າ 45)
13. ລະຫັດ 460: ຍົກເວັ້ນຄ່າພາສີ-ອາກອນ ສະເພາະນັກການທູດ ແລະ ອົງການຈັດຕັ້ງສາກົນ
14. ລະຫັດ 470: ຍົກເວັ້ນຄ່າພາສີ-ອາກອນ ສຳລັບໂຄງການຊ່ວຍເຫລືອລ້າ ແລະ ກູ້ຢືມຂອງລັດທະບານ
15. ລະຫັດ 480: ຍົກເວັ້ນຄ່າພາສີ-ອາກອນ ສຳລັບໂຄງການລົງທຶນຂອງລັດຖະບານ
16. ລະຫັດ 481: ຍົກເວັ້ນຄ່າພາສີ-ອາກອນ ສຳລັບໂຄງການລົງທຶນຂອງເອກະຊົນ
17. ລະຫັດ 490: ຍົກເວັ້ນຄ່າພາສີ-ອາກອນ ຕາມນະໂຍບາຍຂັ້ນເທິງ
18. ລະຫັດ 600: ຍົກເວັ້ນຄ່າພາສີ-ອາກອນ (ສະເພາະການນຳເຂົ້າຄືນ "60")

**ມາດຕາ 5:** ການກຳນົດລະບອບໃບແຈ້ງພາສີເປັນລາຍລະອຽດທີ່ມີ 7 ຕົວເລກ (ຫ້ອງທີ 37 ຂອງໃບແຈ້ງພາສີເປັນລາຍລະອຽດ) ຕົວເລກນັ້ນແມ່ນໃຫ້ກຳນົດຕາມລຳດັບໂດຍເລີ່ມຈາກ: 2 ຕົວເລກທຳອິດແມ່ນເລກລະຫັດເຄົ້າຂອງລະ ບອບໃບແຈ້ງ ທີ່ໄດ້ກຳນົດໄວ້ໃນ **ມາດຕາ 2**, 2 ຕົວເລກຕໍ່ຈາກລະຫັດເຄົ້າແມ່ນລະບອບໃບແຈ້ງພາສີຄັ້ງກ່ອນ ຫລືລະບອບສະສາງ ທີ່ໄດ້ກຳນົດໄວ້ໃນ **ມາດຕາ 3**, 3 ຕົວເລກສຸດທ້າຍແມ່ນເງື່ອນໄຂໃນການຊຳລະຄ່າພາສີ ແລະ ພັນທະອື່ນໆ ທີ່ກຳນົດໄວ້ໃນ **ມາດຕາ 4** ຂອງຂໍ້ຕົກລົງສະບັບນີ້ (ລາຍລະອຽດມີເອກະສານຊ້ອນທ້າຍ 1).

<u>ມາດຕາ 6:</u> ມອບໃຫ້ພະແນກຂໍ້ມູນຂ່າວສານ-ແຜນການ ປັບປຸງລະບົບອີເລັກໂທຣນິກ ທີ່ນຳໃຊ້ເຂົ້າໃນວຽກງານການແຈ້ງພາສີ ໃຫ້ສຳເລັດໃນທ້າຍເດືອນ 10 ປີ 2013 ແລະ ເລີ້ມແຕ່ວັນທີ 01 ພະຈິກ 2013, ສົກປີງົບປະມານ 2013-2014 ໃຫ້ໄດ້ນຳໃຊ້ເລກລະຫັດໃບແຈ້ງເສຍພາສີໃໝ່ໃນຂອບເຂດທົ່ວປະເທດ.

<u>ມາດຕາ 7:</u> ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງຂອງກົມ ພາສີ ສະບັບເລກທີ: 1937/ກພສ, ລົງວັນທີ: 20/06/2011 ແລະ ບົດແນະນຳເພີ້ມເຕີມ ສະບັບເລກທີ: 00385/ກພສ, ລົງວັນທີ: 10/10/2012, ກ່ຽວກັບລະບອບໃບແຈ້ງພາສີເປັນລາຍລະອຽດ.

<u>**ຫົວໜ້າກົມພາສີ**</u>

ວາດສະພາງທອງ ສີພັນດອນ

thsaphangthong SIPHANDO